# ໂຮງຮຽນວັນອາທິດ
## ວັນອາທິດທີ 11 ຕຸລາ 2020 (10-11-2020)

## ໃຫ້ກຽດແກ່ຄວາມສັມພັນທັງໝົດ

ໃຜເປັນຕົວຢ່າງຂອງຄວາມສັດຊື່ສ່ວນຕົວໃນຊີວິດຂອງທ່ານ?

**ຈຸດສໍາຄັນໃນບົດຮຽນ**: ຄວາມສັດຊື່ແລະຄວາມເພິ່ງພໍໃຈໃນພຣະຄຣິດເປັນພື້ນຖານສໍາລັບຄວາມສັມພັນທີ່ດີ.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ການລະເບີດມ້າງຕຶກອາຄານເປັນສິ່ງທີ່ໜ້າເບິ່ງອັນອັສຈັນ. ພຽງນຶ່ງນາທີທີ່ທ່ານເຫັນຕຶກອາຄານທີ່ຕັ້ງຢູ່, ຫລືຂົວ, ຫລືອຸໂມງ, ແລະຫຼັງຈາກນັ້ນພາຍໃນສອງສາມວິນາທີ,ສິ່ງກໍ່ສ້າງທັງໝົດພັງລົງເປັນກອງຂີ້ເຖົ່າແລະເສດຫັກພັງ.

ໃນການຄວບຄຸມການທັບມ້າງທາງອຸດສະຫະກັມ, ຜູ້ຊ່ຽວຊານຈະວາງລະເບີດນ້ອຍໆ ຈໍານວນນຶ່ງຕາມຍຸດທະວິທີໄວ້ຕາມສິ່ງກໍ່ສ້າງນັ້ນ. ຍຸດທະວິທີການຈັດວາງເປັນສິ່ງສໍາຄັນທີ່ສຸດເພື່ອທໍາລາຍຄວາມສົມບູນຂອງໂຄງສ້າງຂອງອາຄານໂດຍທີ່ບໍ່ໄດ້ທໍາລາຍສິ່ງອື່ນໆທີ່ຢູ່ອ້ອມຮອບມັນ.

ຄວາມຊື່ສັດທາງດ້ານໂຄງສ້າງຂອງຊີວິດເຮົາແລະຄວາມສັມພັນຂອງພວກເຮົາມີຄວາມສໍາຄັນເທົ່າກັນກັບໂຄງສ້າງຂອງຕຶກອາຄານ ຊຶ່ງໃຊ້ເວລາພຽງວິນາທີເທົ່ານັ້ນເພື່ອໃຫ້ຄວາມສັມພັນຖືກທໍາລາຍ. ຄວາມຕົວະພຽງເທື່ອດຽວສາມາດເຮັດໃຫ້ມິດຕະພາບລົ້ມລົງໄດ້. ຄໍາກ່າວຫາ ການໃສ່ຮ້າຍພຽງຄັ້ງດຽວສາມາດທໍາລາຍຜູ້ຄົນທີ່ຍອມຮັບພວກເຮົາທາງເລືອກທີ່ຜິດພາດພຽງຄັ້ງດຽວຈະດໍາເນີນໄປຈົນສຸດ ເຮັດໃຫ້ສິ່ງທີ່ຈະເຣີນມາໄດ້ຫລາຍທົດສະວັດແລ້ວຖືກທໍາລາຍເພພັງລົງ. ພື້ນຖານອັນໜັກແໜ້ນມີໄວ້ແລ້ວໃນພຣະບັນຍັດສິບປະການ ຊຶ່ງໄດ້ສ້າງຂຶ້ນເທິງກຽດແລະຄວາມເພິ່ງພໍໃຈເພື່ອໃຫ້ໝັ້ນໃຈເຖິງຄວາມສັດຊື່ຂອງໂຄງສ້າງຄວາມສັມພັນຂອງພວກເຮົາ.

### ພຣະຄັມພີກ່າວວ່າແນວໃດ?

### 1. <u>ອົບພະຍົບ 20:15-16</u>

*15 ຢ່າລັກຊັບ  16 ຢ່າເປັນພຍານເທັດໃສ່ຮ້າຍເພື່ອນບ້ານຂອງຕົນ"*

ມື້ນຶ່ງນັກເທດຄົນນຶ່ງໄດ້ຂີ່ຣົດເມ, ລາວເອົາເງິນຄ່າໂດຍສານໃຫ້ຄົນຂັບຣົດເມ ແລະຜູ້ຂັບຣົດໄດ້ເອົາເງິນທອນໃຫ້ລາວ. ໃນຂະນະທີ່ນັກເທດນັ່ງລົງ ລາວໄດ້ນັບເບິ່ງເງິນຫລຽນແລະພົບວ່າຄົນຂັບຣົດເມໄດ້ທອນເງິນເກີນ. ລາວກັບໄປທາງໜ້າຣົດອີກ ລາວໄດ້ຍື່ນເງິນໃຫ້ຄົນຂັບສອງຫລຽນໆລະ 25 ເຊັນ ແລະກ່າວວ່າ, "ເຈົ້າໄດ້ທອນເງິນໃຫ້ຂ້ອຍເກີນ."

ຄົນຂັບລົດເມໄດ້ຍິ້ມແລະເວົ້າວ່າ,“ ອາຈານ, ຂ້ານ້ອຍຂອບໃຈດ້ວຍໃຈຈິງກັບສິ່ງນີ້, ເພາະວ່າຂ້ານ້ອຍໄດ້ໄປຮ່ວມນະມັສການໃນໂບດຂອງທ່ານມື້ວານນີ້, ແລະຂ້ານ້ອຍໄດ້ຍິນຄໍາເທສນາຂອງທ່ານກ່ຽວກັບຄວາມສັດຊື່.  ຂ້ານ້ອຍຕັ້ງໃຈທອນເງິນໃຫ້ທ່ານເກີນ ເພື່ອຢາກຮູ້ວ່າທ່ານດໍາລົງຊີວິດຕາມທີ່ທ່ານໄດ້ເທສນາຫຼືບໍ່."

ຄວາມສັດຊື່ຄວນຈະເປັນແບບອັດຕະໂນມັດສໍາລັບພວກເຮົາ.  ພວກເຮົາບໍ່ເຄີຍຮູ້ວ່າໃຜກໍາລັງຕິດຕາມເບິ່ງການກະທໍາຂອງພວກເຮົາຫລືຟັງຄໍາເວົ້າຂອງພວກເຮົາ.   ການປະພຶດຕົນເອງຢ່າງສັດຊື່ແລະດ້ວຍຄວາມຈິງຮັກພັກດີເປັນຫົວໃຈສອງປະການຂອງພຣະບັນຍັດສິບປະການ:  " *ຢ່າລັກຊັບ,   ຢ່າເປັນພຍານເທັດໃສ່ຮ້າຍເພື່ອນບ້ານຂອງຕົນ*".

ພວກເຮົາຕ້ອງປະຕິບັດຕໍ່ຄົນອື່ນດ້ວຍຄວາມນັບຖື - ແລະນັ້ນລວມທັງການນັບຖືຊັບສິນຂອງພວກເຂົານຳ. ຄຳເວົ້າຂອງພວກເຮົາກໍຄວນສະແດງຄວາມໂຄຣົບຕໍ່ຄົນອື່ນ. ຄຸນງາມຄວາມດີເຫລົ່ານີ້ແມ່ນສະແດງອອກດ້ວຍຄວາມຮັກແລະໄດ້ຊີ້ບອກວ່າເຮົາເປັນສາວົກຂອງຣາຊອານາຈັກ. ພຣະເຢຊູສລຸບເຣື່ອງນີ້ເມື່ອພຣະອົງກ່າວວ່າ, *"ຖ້າເຈົ້າທັງຫລາຍມີຄວາມຮັກຊຶ່ງກັນແລະກັນ ດັ່ງນີ້ແຫລະ, ຄົນທັງປວງກໍຈະໄດ້ຮູ້ວ່າເຈົ້າທັງຫລາຍເປັນສາວົກຂອງເຮົາ"* (ໂຢຮັນ 13:35).

ຮັກກັນແລະກັນລວມທັງການເວົ້າຄວາມຈິງດ້ວຍຄວາມຮັກຕລອດເວລາ (ເອເຟໂຊ 4:15). ຫລາຍຄົນແກ້ຕົວເຣື່ອງຕົວະວ່າເປັນພຽງ "ການຕົວະສີຂາວນ້ອຍໆເທົ່ານັ້ນ." ຄຳຕົວະເລັກໆນ້ອຍໆກໍຄືກັບການຖືພາທ້ອງ "ນ້ອຍ" ຊຶ່ງຈະສະແດງໃຫ້ເຫັນວ່າທ້ອງໄດ້ໃຫຍ່ຂຶ້ນຫຼັງຈາກນັ້ນ. ຄວາມຕົວະເໝືອນກັບການຫລິ້ນເຄື່ອງຫລິ້ນກິລາຊະນິດນຶ່ງເອີ້ນວ່າບູມເມີແຣງ(boomerang) ເມື່ອແກວ່ງອອກໄປແລ້ວມັນຈະເຈີດກັບມາຫາຜູ້ແກວ່ງແລະຈະເຮັດໃຫ້ເຈັບປວດຢ່າງສາຫັດຖ້າຫລົບບໍ່ທັນ(ຜູ້ແກວ່ງຈະຕ້ອງຊຳນານ)

ຂີ້ຕົວະຈະກັບມາຢູ່ອ້ອມຂ້າງເຮົາສເມີ. ດ້ວຍເຫດຜົນອັນດຽວນີ້, ພວກເຮົາບໍ່ຄວນຂີ້ຕົວະ. ແຕ່ນອກຈາກນີ້, ພວກເຮົາຈຳເປັນຕ້ອງດຳລົງຊີວິດດ້ວຍຄວາມສັດຊື່ເພາະວ່າຊີວິດທີ່ພວກເຮົາໄດ້ຮັບນີ້ກໍເປັນວິທີທາງທີ່ຈະນຳພຣະກຽດມາສູ່ພຣະເຈົ້າແລະຂຍາຍອານາຈັກຂອງພຣະອົງຢູ່ເທິງໂລກ. ຊີວິດຂອງພວກເຮົາຄວນເປັນແວ່ນແຍງຂອງຜູ້ທີ່ສ້າງເຮົາ ໃນເວລາທີ່ພວກເຮົາປະພຶດຕົນນອກຄຸນງາມຄວາມດີຂອງອານາຈັກ, ພວກເຮົາຍັງບໍ່ໄດ້ສະທ້ອນໃຫ້ເຫັນຄວາມຈິງວ່າພຣະເຈົ້າແມ່ນໃຜ ແຕ່ພວກເຮົາກຳລັງສະແດງຕາມການຫຼອກລວງຂອງຊາຕານ, "ພໍ່ແຫ່ງຄວາມຕົວະ" (ໂຢຮັນ 8:44), ຊຶ່ງເປົ້າໝາຍຂອງມັນແມ່ນເພື່ອບິດເບືອນກົດລະບຽບຂອງພຣະເຈົ້າຢູ່ໃນໂລກ. ໃນເວລາທີ່ພວກເຮົາເລືອກທີ່ຈະຕົວະຫລືເວົ້າເຖິງຄວາມຈິງທີ່ບໍ່ຖືກຕ້ອງ, ພວກເຮົາກໍນຸ່ງຫົ່ມລັກສະນະຂອງຊາຕານແທນທີ່ຈະເປັນຂອງພຣະເຈົ້າ.

ການດຳລົງຊີວິດດ້ວຍຄວາມສັດຊື່ ໝາຍເຖິງການສ້າງແບບຢ່າງຄວາມຄິດ, ຄຳເວົ້າ, ແລະການກະທຳຂອງພວກເຮົາທີ່ມາຈາກພຣະເຈົ້າ. ໃນຂະນະທີ່ພວກເຮົາເຮັດສິ່ງນີ້, ພວກເຮົາສາມາດຂຍາຍຣາຊອານາຈັກຂອງພຣະອົງຢູ່ເທິງໂລກໃນຂະນະທີ່ນຳພຣະສະຫງ່າຣາສີມາສູ່ພຣະອົງແລະຄວາມດີມາສູ່ຄົນອື່ນ.

## 2. <u>ອົບພະຍົບ 20:17</u>

*17 ຢ່າອິດສາຢາກໄດ້ເຮືອນຂອງຜູ້ອື່ນ ຢ່າອິດສາຢາກໄດ້ເມັຍຫລືເມັຽ ຢາກໄດ້ຂ້ອຍທາດ ຢາກໄດ້ງົວຄວາຍ ຢາກໄດ້ລໍຫລືສິ່ງອື່ນໃດທີ່ເປັນຂອງຄົນອື່ນ"*

ນິທານອີສົບໄດ້ເລົ່າເຣື່ອງຂອງໝາຕົວນຶ່ງທີ່ຄາບກະດູກຍ່າງຂ້າມຂົວ. ເມື່ອມັນແນມລົງໄປໃນນ້ຳມັນໄດ້ເຫັນຮູບສະທ້ອນຂອງກະດູກຢູ່ໃນນ້ຳນັ້ນໃຫຍ່ກວ່າ. ມັນຕ້ອງການກະດູກທີ່ໃຫຍ່ກວ່າ ໃນທັນທີມັນກໍຄາຍກະດູກທີ່ຢູ່ປາກຂອງມັນເພື່ອຈະໄປຄາບເອົາກະດູກທີ່ຢູ່ໃນນ້ຳນັ້ນ ເມື່ອເຮັດເຊັ່ນນັ້ນ ກະດູກຢູ່ໃນປາກຂອງມັນກໍຕົກລົງໄປໃນນ້ຳແລະຢ່າງໄວວາແລະຈົມນ້ຳຫາຍໄປ. ໝາບໍ່ພຽງແຕ່ລົ້ມເຫລວທີ່ຈະໄດ້ກະດູກໃຫຍ່ທີ່ເປັນພາບລວງຕາ ແຕ່ມັນໄດ້ສູນເສັຽກະດູກອັນແຊບຊ້ອຍທີ່ມັນຄາບຢູ່ນັ້ນ.

ການບໍ່ພໍໃຈກັບສິ່ງທີ່ທ່ານມີຢູ່ແລ້ວແມ່ນເສັ້ນທາງທີ່ໄວທີ່ສຸດທີ່ຈະເຮັດໃຫ້ສູນເສັຽໄປ. ຜູ້ໂຄສະນາຮູ້ດີກ່ຽວກັບທ່າອຽງຂອງພວກເຮົາຕໍ່ຄວາມໂລບມາກໂລພາ; ພວກເຂົາໃຊ້ເວລາຢ່າງຫລວງຫລາຍແລະເງິນເພື່ອພະຍາຍາມເຮັດໃຫ້ພວກເຮົາບໍ່ພໍໃຈ. ພວກເຂົາຮູ້ວ່າຖ້າພວກເຮົາບໍ່ພໍໃຈເຖິງທີ່ສຸດກັບສະຖານະການປະຈຸບັນຂອງພວກເຮົາ, ພວກເຮົາຈະຍອມຕົວກັບການຂາຍຣາຄາທີ່ສູງສຸດຂອງພວກເຂົາ. ຍ້ອນຄວາມໂລບທີ່ບໍ່ສິ້ນສຸດຂອງພວກເຮົາ, ພວກເຮົາຫຼາຍຄົນໄດ້ຮັບເອົາຄຳຂວັນທີ່ວ່າ, "ຂ້ອຍຊື້,ເພາະວ່າ, ຂ້ອຍມັກຊື້." ພວກເຮົາບໍ່ມີຄວາມສຸກເວັ້ນເສັຽແຕ່ວ່າພວກເຮົາຈະຫາໄດ້ຫຼາຍຂຶ້ນອີກ.

ຄວາມພໍໃຈບໍ່ໄດ້ຂຶ້ນຢູ່ກັບສິ່ງເຫຼົ່ານີ້. ຄວາມພໍໃຈແມ່ນການຮູ້ວ່າພຣະເຈົ້າຊົງປະທານໃຫ້ຕາມຄວາມຈຳເປັນຂອງທ່ານ, ແລະຮັບເອົານັ້ນສິ່ງທີ່ພຣະອົງປະທານໃຫ້ນັ້ນດ້ວຍຄວາມກະຕັນຍູ.

- ຄວາມພໍໃຈເໝືອນກັບຄວາມສຸກໃນການຂັບຣົດເກົ່າ(jalopy) ໃນຂະນະທີ່ທ່ານຄິດວ່າທ່ານກຳລັງຂັບຣົດລຸ້ນໃໝ່ (Mercedes) ທັງສອງກໍຣະນີນີ້ທ່ານກໍມີຍານພາຫະນະຂັບຂີ່.

- ຄວາມພໍໃຈແມ່ນມີຄວາມສຸກໃຈທີ່ໄດ້ຢູ່ໃນອາພາດເມັນຂນາດ 800 ຕາລາງຟຸດ ເໝືອນກັບໄດ້ຢູ່ເຮືອນ 4000 ຕາລາງຟຸດ. ໃນສອງກໍຣະນີນີ້ ທ່ານກໍມີຫລັງຄາມຸງຢູ່ເທິງຫົວຂອງທ່ານ.

- ຄວາມພໍໃຈ ແມ່ນຍິນດີກັບການກິນຮ໊ອດດ໊ອກເໝືອນກັບກິນປີ້ງຊີ້ນຕິດດູກ(T-Bone steak). ທັງສອງກໍຣະນີນີ້ ທ່ານກໍບໍ່ຫິວອີກ.

- ຄວາມພໍໃຈແມ່ນການນຸ່ງເສື້ອຜ້າຈາກຮ້ານຂາຍເລ (thrift store) ເໝືອນກັບທ່ານໄດ້ມາຈາກຮ້ານທີ່ຫລູຫລາ (outfit fancy) ທັງສອງກໍຣະນີນີ້ ທ່ານກໍມີເຄື່ອງນຸ່ງປົກຫລັງຂອງທ່ານ.

ເມື່ອພວກເຮົາດຳລົງຊີວິດດ້ວຍຄວາມພໍໃຈຕາມທີ່ຕັ້ງໃຈໄວ້, ພວກເຮົາກໍກຳລັງຮັບຮູ້ຄວາມດີຂອງພຣະເຈົ້າໃນການຈັດຫາໃຫ້ຂອງພຣະອົງ. ພວກເຮົາຍອມໃຫ້ຄວາມກະຕັນຍູມາແທນຄວາມຕ້ອງການ. ສະພາບການຫຼືສິ່ງຂອງຕ່າງໆບໍ່ ຄວນໃຫ້ຂັບເຄື່ອນຄວາມພໍໃຈຂອງພວກເຮົາ. ເຄັດລັບໃນການເພິ່ງພໍໃຈແມ່ນມາຈາກການຮູ້ວ່າທຸກຢ່າງທີ່ພວກເຮົາມີແລະທຸກສິ່ງທີ່ພວກເຮົາສາມາດເຮັດໄດ້ແມ່ນມາຈາກພຣະຄຣິດຜູ້ເພີ້ມຄວາມເຂັ້ມແຂງ ແລະຫ້າງຫາໃຫ້ພວກເຮົາ.

ຄວາມພໍໃຈແມ່ນກຸນແຈສຳຄັນໃນການດຳລົງຊີວິດທີ່ສັດຊື່ເພາະມັນໃຫ້ຄວາມປອດພັຍທີ່ຈຳເປັນໃນການພັກຜ່ອນຕາມຄວາມເປັນຈິງໃນປັດຈຸບັນນີ້. ເມື່ອທ່ານຮູ້ວ່າທຸກສິ່ງທີ່ທ່ານມີມາຈາກພຣະອົງຜູ້ຊົງຮັກທ່ານຫຼາຍທີ່ສຸດ, ທ່ານກໍສາມາດປ່ອຍແຜນການຕ່າງໆ, ການຄວບຄຸມ, ຄວາຕົວະ, ການໃສ່ຮ້າຍ, ຫລືຫລົບຫລີກເພື່ອຈະໄດ້ຢູ່ທາງໜ້າ. ເມື່ອທ່ານປ່ອຍຄວາມບົກຜ່ອງທີ່ພຍາຍາມຈະຢູ່ທາງຫນ້າ, ທ່ານສາມາດພັກຜ່ອນໃນຄວາມຈິງທີ່ວ່າມີແຫ່ງການຫ້າງຫາຂອງພຣະເຈົ້າຈະຕອບສນອງສິ່ງທີ່ທ່ານຈຳເປັນເພື່ອຈະໄດ້ປະສົບກັບຊີວິດທີ່ຄົບສົມບູນ. ຊອກຫາຄວາມເພິ່ງພໍໃຈໃນສິ່ງທີ່ພຣະເຈົ້າມີໃຫ້ແລະທ່ານຈະພົບເຄັດລັບທີ່ເຮັດໃຫ້ຊີວິດໄດ້ຮັບຄວາມເພິ່ງພໍໃຈ.

### 3. <u>ເພງສັຣເສີນ 37:1-6</u>

*1 ຢ່າເສັຽໃຈຍ້ອນຄົນຊົ່ວ ຢ່າອິດສາຜູ້ທີ່ໄດ້ມາໃນທາງຜິດ 2 ເຂົາຈະສູນເສັຽໄປເໝືອນຫຍ້າທີ່ຫ່ຽວແຫ້ງລົງ ເຂົາຈະ*
*ຕາຍເໝືອນດັ່ງຕົ້ນໄມ້ທີ່ຫ່ຽວແຫ້ງ 3 ຈົ່ງເຊື່ອຟັງພຣະຜູ້ເປັນເຈົ້າ ແລະສ້າງແຕ່ຄວາມດີ ແລ້ວອາສັຍຢູ່ໃນປະເທດຂອງ*
*ຕົນຢ່າງປອດພັຍ 4 ຈົ່ງຊອກຫາຄວາມສຸກໃນພຣະຜູ້ເປັນເຈົ້າ ແລະພຣະອົງຈະປະທານໃຫ້ຕາມໃຈມັກຂອງເຈົ້າ*
*5 ຈົ່ງຖວາຍຕົວເອງແດ່ພຣະຜູ້ເປັນເຈົ້າ ຈົ່ງເຊື່ອພຣະອົງ ແລະພຣະອົງຈະຊ່ອຍເຫລືອເຈົ້າ 6 ພຣະອົງຈະຊົງກະທຳໃຫ້*
*ຄວາມດີຂອງເຈົ້າຊ່າລືໄປ ແລະຄວາມຊອບທັມຂອງເຈົ້າເປັນເໝືອນດັ່ງດວງຕາເວັນໃນຍາມທ່ຽງ"*

ຖ້ອຍຄຳເຫລົ່ານີ້ຈາກກະສັດດາວິດຊຶ່ງໄດ້ມາຈາກພຣະບັນຍັດທີ່ກ່າວວ່າບໍ່ໃຫ້ໂລບມາກ. ເພິ່ນເລີ້ມຕົ້ນໂດຍການເຕືອນພວກເຮົາບໍ່ໃຫ້ອິດສາຜູ້ທີ່ເຮັດຜິດ. ເປັນການງ່າຍທີ່ຈະອິດສາຜູ້ທີ່ບໍ່ນັບຖືພຣະເຈົ້າແຕ່ເບິ່ງຄືວ່າຈະເຣີນຮຸ່ງເຮືອງ. ດັ່ງທີ່ນັກຂຽນບົດເພງອີກຄົນໜຶ່ງຂຽນວ່າ,*"ແຕ່ຝ່າຍຂ້າພຣະອົງ ຂ້າພຣະອົງເກືອບລົ້ມລົງ ຕີນຂອງຂ້າພຣະອົງເກືອບມື່ນພະລາດໄປເພາະຂ້າພຣະອົງໄດ້ອິດສາຄົນຈອງຫອງ ຄືຄົນຊົ່ວຮ້າຍທີ່ຈະເຣີນຮຸ່ງເຮືອງ"* (ເພງສັຣເສີນ 73:2-3).

ຢາຖອນພິດສຳລັບຄວາມອິດສາແລະຄວາມບໍ່ພໍໃຈດັ່ງກ່າວແມ່ນມາຈາກການເບິ່ງພຣະເຈົ້າແທນທີ່ຈະເບິ່ງຄົນຊົ່ວ. ພວກເຮົາຕ້ອງ "ໄວ້ວາງໃຈ" ແລະ "ຊື່ນຊົມ" ໃນພຣະອົງແລະພຣະອົງເທົ່ານັ້ນ. ພວກເຮົາທັງໝົດເຄີຍປາຖນາຕ້ອງການພັກຜ່ອນໃນພຣະເຈົ້າ.

ຂ້າພະເຈົ້າຍອມຮັບວ່າຂ້າພະເຈົ້າໄດ້ຕໍ່ສູ້ກັບຄວາມເພິ່ງພໍໃຈໃນຕອນເລີ້ມຕົ້ນຂອງການຮັບໃຊ້ຂອງຂ້າພະເຈົ້າ. ຂ້າພະເຈົ້າຕ້ອງການໃຫ້ງານພັນທະກິດເຕີບໃຫຍ່ແລະຂະຫຍາຍອອກ. ຂ້າພະເຈົ້າສົງສັຍໃນບາງຄັ້ງວ່າການເຕີບໂຕນັ້ນພັກຜ່ອນພຽງເທົ່າໃດກໍຍັງຢູ່ເທິງບ່າຂອງຂ້າພະເຈົ້າ. ນັ້ນອາດເປັນສິ່ງທີ່ດີ, ແຕ່ທັດສະນະຄະຕິຂອງຂ້າພະເຈົ້າເຮັດໃຫ້ຂ້າພະເຈົ້າຕ້ອງເຮັດວຽກຫລາຍຊົ່ວໂມງ ເພື່ອຂ້າພະເຈົ້າອາດຈະບໍ່ຈຳເປັນຕ້ອງເຮັດແນວນັ້ນ. ຈຸດສຸມຂອງຂ້າພະເຈົ້າແມ່ນຢູ່ທີ່ຄວາມພະຍາຍາມຂອງຂ້າພະເຈົ້າເອງ.

ຄຳແນະນຳຫຼັກຢ່າງໜຶ່ງໄດ້ປ່ຽນແປງສິ່ງທັງໝົດນີ້ສຳລັບຂ້າພະເຈົ້າ. ຂ້າພະເຈົ້າໄດ້ຮັບຄຳແນະນຳນີ້ຈາກອະດີດເພື່ອນຮ່ວມຫ້ອງຮຽນສາສນາສາດຂອງຂ້າພະເຈົ້າຜູ້ໄດ້ປະຕິບັດສາສນາກິດທີ່ມີປະສິດຕິຜົນສູງສຸດຂອງລາວ. ທ່ານກ່າວວ່າ, "ໂທນີ, ຢ່າລືມຄວາມຈິງນີ້ເດີ: ທ່ານມີພຽງແຕ່ແຫຼ່ງດຽວ ພຣະເຈົ້າເປັນແຫລ່ງຂອງທ່ານ ຢ່າງອື່ນທຸກຢ່າງເປັນພຽງແຕ່ຊັບພະຍາກອນເທົ່ານັ້ນ." ຄວາມຈິງນັ້ນຊ່ວຍໃຫ້ຂ້າພະເຈົ້າສາມາດພັກຜ່ອນໄດ້.

ບໍ່ມີໃຜໃນພວກເຮົາຈຳເປັນຕ້ອງກັງວົນຫລືຈົ່ມກ່ຽວກັບສິ່ງທີ່ຄົນອື່ນກຳລັງເຮັດສຳເຣັດຫລືກຳລັງເຮັດຢູ່. ຖືວ່າເປັນແນວໂນ້ມທັມມະດາທີ່ຈະປຽບທຽບ, ແຕ່ນັ້ນບໍ່ໄດ້ໝາຍຄວາມວ່າເປັນສິ່ງທີ່ດີ. ພວກເຮົາສາມາດປ່ອຍການແຂ່ງດີກັນໄປແລະຮັບເອົາຄວາມສຳເຣັດຂອງພວກເຮົາໃນພຣະຄຣິດ. ເມື່ອທ່ານເຮັດເຊັ່ນນັ້ນ, ທ່ານຈະໄດ້ຮັບຄວາມປາຖນາຈາກຫົວໃຈຂອງທ່ານ. ທ່ານຈະໄດ້ຮັບສິ່ງທີ່ພຣະເຈົ້າມີໄວ້ສຳລັບທ່ານ ແລະສິ່ງທີ່ພຣະອົງຫ້າງຫາໄວ້ບໍ່ເຄີຍໝົດໄປຈັກເທື່ອພຣະອົງມີຢ່າງພຽງພໍສເມີ. ຖວາຍຈິດໃຈຂອງທ່ານໃຫ້ພຣະຄຣິດໂດຍມີຄວາມຈິງຮັກພັກດີຕໍ່ພຣະອົງ ຫຼັງຈາກນັ້ນ, ສັງເກດເບິ່ງພຣະອົງຈະເຮັດໃຫ້ທ່ານມີຄວາມຍິນດີໃນຂະນະທີ່ພຣະອົງຊົງພໍພຣະທັຍກັບທ່ານ.

## ນຳໃຊ້ໃນຊີວິດ

ທ່ານຈະສແວງຫາຢ່າງຈິງຈັງແນວໃດເພື່ອດຳລົງຊີວິດທີ່ມີຄວາມສັດຊື່? ຈົ່ງພິຈາຣະນາເບິ່ງການນຳໃຊ້ດັ່ງຕໍ່ໄປນີ້:

➢ **ກວດເບິ່ງຄຳເວົ້າຂອງທ່ານ.** ຈົ່ງມີສະຕິຕໍ່ຄຳເວົ້າແລະການກະທຳຂອງທ່ານໃນອາທິດນີ້. ຖ້າທ່ານຖືກທົດລອງໃຫ້ເວົ້າຫຼືເຮັດໃນສິ່ງທີ່ບໍ່ສັດຊື່ແລະບໍ່ຈິງ, ຈົ່ງຢ່າເຮັດ, ຕັ້ງໃຈທີ່ຈະເປັນຄົນທີ່ສັດຊື່.

➢ **ຈື່ຈຳໄວ້.** ມຸ້ງໝັ້ນທີ່ຈະທ່ອງຈຳ 2 ໂກຣິນໂທ 9: 8: *" ແລະພຣະເຈົ້າຊົງຣິດອາດປະທານພຣະຄຸນອັນລົ້ນອຸດົມທຸກຢ່າງແກ່ເຈົ້າທັງຫລາຍ ເພື່ອໃຫ້ພວກເຈົ້າມີທຸກສິ່ງທຸກຢ່າງພຽງພໍສຳລັບຕົວສເ ມີ ທັງຈະມີສິ່ງຂອງບໍຣິບູນສຳລັບການງານດີທຸກຢ່າງດ້ວຍ"* ໃຫ້ພຣະຄຳຂໍ້ນີ້ສືບຕໍ່ເຕືອນທ່ານເລື້ອຍໆວ່າທ່ານມີທຸກສິ່ງທີ່ທ່ານຕ້ອງການແລ້ວ.

➢ **ໃຫ້ກຳລັງໃຈ.** ພວກເຮົາທຸກຄົນສາມາດໃຊ້ການຢືນຢັນທາງບວກໃນບາງກໍຣະນີຂອງຄວາມສັດຊື່ແລະຄວາມເພິ່ງພໍໃຈ. ສິ່ງທີ່ພວກເຮົາເຫັນໃນການສື່ຂ່າວສາມາດເຮັດໃຫ້ພວກເຮົາບໍ່ພໍໃຈກັບຊີວິດຂອງພວກເຮົາເອງ. ເລືອກທີ່ຈະເປັນແຫຼ່ງໃຫ້ກຳລັງໃຈແກ່ຜູ້ທີ່ຕໍ່ສູ້ກັບຄວາມບໍ່ເພິ່ງພໍໃຈ.

ພິຈາຣະນາເບິ່ງຜົນກະທົບໃນການດຳລົງຊີວິດທີ່ມີຄວາມສັດຊື່ແລະຄວາມເພິ່ງພໍໃຈ ຊຶ່ງຈະມີຕໍ່ທ່ານແລະຄົນອ້ອມຂ້າງທ່ານ. ຂໍໃຫ້ພຣະເຈົ້າປະທານຄວາມເຂັ້ມແຂງແລະພລັງໃຫ້ທ່ານເປັນຄົນທີ່ຮັກສາຫົວໃຈຂອງພຣະບັນຍັດສິບປະການຜ່ານຊີວິດແຫ່ງຄວາມຮັກ.

**ອຸປຖັມໂດຍລາວຊາວເທີນບັບຕິດສັມພັນ www.lsbf.org**